KHO TOK LONG 29.01.2008

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------=000=----------

ກະຊວງການເງິນ

ເລກທີ 0371 /ກງ

ນະຄອນຫຼວງວຽງຈັນ, ວັນທີ 19 FEB 2008

# ຂໍ້ຕົກລົງ

## ກ່ຽວກັບການກຳນົດຊົ່ວຄາວອັດຕາການເກັບຄ່າຊັບພະຍາກອນ ປະເພດ ດິນດຳ, ດິນແດງ, ແຮ່-ຊາຍ ແລະ ອື່ນໆ

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 09/ສພຊ ລົງວັນທີ 12 ຕຸລາ 2002.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007. ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ.
- ອີງຕາມ ແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 152/ຄລບ ລົງວັນທີ 29/01/2008.

ເພື່ອໃຫ້ອັດຕາການເກັບຄ່າຊັບພະຍາກອນ ປະເພດ ດິນດຳ, ດິນແດງ, ແຮ່ຊາຍ.... ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ແທດເໝາະກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ເພື່ອຊຸກຍູ້ສົ່ງເສີມການຜະລິດ, ການບໍລິການ ແລະ ການປະຕິບັດພັນທະເຂົ້າງົບປະມານ.

## ລັດຖະມົນຕີວ່າການກະຊວງການເງິນອອກຂໍ້ຕົກລົງ :

<u>ມາດຕາ 1</u> : ປັບປຸງມາດຕາ 16 ຂໍ້ 3 ຂອງມະຕິຕົກລົງສະພາລັດຖະມົນຕີ ເລກທີ 47/ປສລ ລົງວັນທີ 26 ມິຖຸນາ 1989. ກ່ຽວກັບພື້ນຖານຄິດໄລ່ ແລະ ອັດຕາພາສີຊັບພະຍາກອນຫີນແຮ່, ຊາຍ, ດິນດຳ, ດິນແດງ, ດິນໜຽວ, ຫີນຜາກ້ອນ, ດັ່ງລຸ່ມນີ້:

| | |
|---|---|
| 1. ດິນແດງ | 0.3 US$/ມ$^3$ |
| 2. ດິນດຳ | 0.3 US$/ມ$^3$ |
| 3. ດິນໜຽວ | 0.3 US$/ມ$^3$ |
| 4. ດິນຊາຍ | 0.4 US$/ມ$^3$ |
| 5. ຫີນແຮ່ | 0.6 US$/ມ$^3$ |
| 6. ຫີນຜາກ້ອນ | 0.7 US$/ມ$^3$ |

<u>ມາດຕາ 2</u> : ບຸກຄົນ, ນິຕິບຸກຄົນ ແລະທຸກພາກສ່ວນເສດຖະກິດໃນຂອບເຂດທົ່ວປະເທດທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ ຫຼື ຂຸດຄົ້ນຊັບ ພະ ຍາກອນ ມີໜ້າທີ່ເສຍພັນທະຄ່າຊັບພະຍາກອນ ເວັ້ນເສຍແຕ່ກໍລະນີທີ່ມີການຍົກເວັ້ນຕາມການຕົກລົງ ຂອງລັດຖະບານ.

<u>ມາດຕາ 3</u> : ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະຜູ້ປະກອບການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນຫີນແຮ່, ຊາຍ, ດິນດຳ, ດິນແດງ, ດິນໜຽວ, ຫີນຜາ ສຳລັບການກໍ່ສ້າງຂະໜາດນ້ອຍ ມູນຄ່າການລົງທຶນບໍ່ສູງ ແລະ ໂຄງການທີ່ບໍ່ມີສັນຍາ ສະເພາະກັບລັດຖະບານ, ສ່ວນໂຄງການ ກໍ່ສ້າງຂະໜາດໃຫຍ່ນັ້ນ, ແມ່ນໃຫ້ປະຕິບັດຕາມສັນຍາທີ່ລັດຖະບານໄດ້ເຊັນ ກັບ ຜູ້ລົງທຶນ.

<u>ມາດຕາ 4</u> : ກະຊວງການເງິນ, ບັນດາກະຊວງ ແລະ ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ບຸກຄົນ, ນິຕິບຸກຄົນ ແລະ ຫົວໜ່ວຍທຸລະກິດ ຈົ່ງຮັບຮູ້ ແລະ ຈັດຕັ້ງ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ,ຈົນກວ່າຈະປະກາດໃຊ້ລັດຖະບັນຍັດ ວ່າດ້ວຍ ອັດຕາຄ່າຊັບພະຍາກອນແຮ່ທາດ.

<u>ມາດຕາ 5</u> : ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກຳນົດ, ກົດລະບຽບ, ຂໍ້ຕົກລົງ ແລະ ຄຳສັ່ງໃນເມື່ອກ່ອນທີ່ມີ ເນື້ອໃນຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງການເງິນ,

ສົມດີ ດວງດີ